**ການບ້ານບົດທີ 8 ພາກຕົ້ນ**

# ທວນຄືນເລື່ອງຊີວິດຂອງໂປໂລ

ຄຳແນະນຳ: ເພື່ອຈະທວນຄືນກ່ຽວກັບຊີວິດຂອງໂປໂລ ໃຫ້ຮຽນຕາມລຳດັບຕໍ່ໄປນີ້:

(1) ໃຫ້ທ່ານພະຍາຍາມຕອບປາກເປົ່າຕາມທີ່ທ່ານຈື່ຈຳ.

(2) ຖ້າບໍ່ຮູ້ຄຳຕອບໃຫ້ເປີດຮຽນໃໝ່ຕາມບົດຮຽນທີ່ຈົດໄວ້ໃນວົງເລັບ.

(3) ການທວນຄືນນີ້ແບ່ງເປັນ 3 ພາກ. ໃຫ້ທ່ານທວນຄືນວັນລະພາກຕໍ່ກັນໄປ 3 ວັນ ແລ້ວກັບໄປຮຽນຊ້ຳຕໍ່ຊ້ຳຈົນໄດ້ ສາມພາກນັ້ນຄື:

ພາກທຳອິດ - ເອເຟໂຊ

ພາກກາງ - ໄປຢັ່ງມມາເກໂດເນຍ

ພາກສຸດທ້າຍ - ເປັນນັກໂທດໃນກາຍຊາເລຍ ກະເລເຕ ເມລິເຕ ແລະ ໂລມ

*<u>ໝາຍເຫດ</u>: ໃນບົດນີ້ (1 ຕ, ຄຳຖາມ 6) ໝາຍຄວາມວ່າ ໃນການບ້ານບົດທີ 1 ພາກຕົ້ນ ຄຳຖາມທີ 6 ຯ ລ ຯ*

## ພາກທຳອິດ - ເອເຟໂຊ

**1** ໂປໂລຜ່ານຄາລາເຕຍໄປເອເຟໂຊ (1 ຕ, ຄຳຖາມ 6) ເທື່ອໃດທີ່ໂປໂລອອກໄປປະກາດບ່ອນໃໝ່ ເພິ່ນກັບໄປຢັ່ງມຄຼິດສະຕະຈັກທີ່ຕັ້ງໄວ້ແຕ່ກ່ອນ. ດັ່ງນັ້ນ ເມື່ອອອກໄປປະກາດເທື່ອທີ 3 ໃນແຂວງອາເຊຍ ເພິ່ນແວ່ໄປຢັ່ງມຄຼິດສະຕະຈັກຄາລາເຕຍ.

ກ. ເຂົາຮິບໂຮມຫຍັງໄວ້? ____________________

ຂ. ເຫັນໃນ 1 ກລທ ບົດທີ 16 ຂໍ້ໃດ? ____________________

ຄ. ຜູ້ທີ່ເດີນທາງໄປປະກາດກັບໂປໂລຊຶ່ງມາຈາກເຂດຄາລາເຕຍນັ້ນຊື່ຫຍັງ? __________

ງ. ມາຈາກເມືອງໃດ? ____________________

**2** ອາຈານຄົນຢິວທີ່ເກີດໃນທະວີບອາຟຼິກກາຢູ່ປະຈຳໃນເອເຟໂຊ (1 ຕ, ຄຳຖາມ 7-11) ໃນເມື່ອໂປໂລຍັງເດີນທາງໃນເຂດຄາລາເຕຍ ມີອາຈານໃໝ່ມາຢູ່ໃນເອເຟໂຊ.

ກ. ອາຈານນັ້ນຊື່ຫຍັງ? ____________________

ຂ. ຄົນຊາດໃດ? ____________________

ຄ. ເກີດໃນເມືອງແລະທະວີບໃດ? ____________________

ງ. ເພິ່ນຮູ້ແຕ່ບັບຕິດສະມາຂອງໃຜ? ____________________

ຈ. ສອງຄົນໃດອະທິບາຍໃຫ້ຮູ້ທາງຂອງພະເຈົ້າຢ່າງຖືກຕ້ອງ? ____________________

ສ. ພີ່ນ້ອງໃນເມືອງເອເຟໂຊ ສະໜັບສະໜຸນໃຫ້ເພິ່ນໄປຢັ່ງມຄຼິດສະຕະຈັກໃດ? __________

ຊ. ເລີຍເກີດມີບັນຫາໃດໃນໂກລິນໂທ? ____________________

**3** ໂປໂລເຖິງເອເຟໂຊແລ້ວ, ແລະພົບຄຼິດສະຕຽນໃໝ່
(ເບິ່ງຮູບທັງ 3 ໃບໃນຄຳຖາມ 1 ປ, 1 ແລະອີກ ຄຳຖາມ 1 ປ, 8-10).
ກ. ມີຊາຍຈັກຄົນມາຮ່ວມນະມັດສະການພະເຈົ້າ? ____________________________
ຂ. ເຂົາຮັບຮູ້ບັບຕິດສະມາຂອງໃຜ? ________________________________________
ຄ. ໂປໂລໃຫ້ເຂົາຮັບບັບຕິດສະມາໃນນາມຂອງໃຜ? __________________________
ງ. ແມ່ນຫຍັງສະເດັດມາເທິງເຂົາ? ________________________________________
ຈ. ເຂົາຕັ້ງຕົ້ນປາກພາສາຢ່າງໃດ? ___________________________________________
ສ. ໂປໂລເຮັດຢ່າງໃດໃນການຫາລ້ຽງຊີບ? ____________________________________

**4** ໂປໂລເລີ້ມປະກາດພະທຳໃນໂຮງທຳມະເທດສະໜາຂອງຄົນຢິວໃນເມືອງເອເຟໂຊ ແຕ່ອີກບໍ່ດົນ ຄົນຢິວທີ່ບໍ່ເຊື່ອໃຫ້ເພິ່ນອອກຈາກທີ່ນັ້ນ. ດັ່ງນັ້ນເພິ່ນໄປເທດສະໜາບ່ອນໃໝ່.
ກ. ຍ້າຍໄປເທດສະໜາຢູ່ໃສ? (ຮູບຫຼັງຈາກຄຳຖາມ 1 ປ, ຄຳຖາມ 1) _______________
ຂ. ເທດສະໜາທີ່ນັ້ນດົນປານໃດ? (2 ຕ, ຄຳຖາມ 2) ____________________________

**5** ປະກາດທົ່ວແຂວງອາເຊຍ (2 ຕ, ຄຳຖາມ 1-5 ແລະ 2 ຊ, 1-5).
ກ. ມີວິທີທາງ 3 ຢ່າງໃດ ທີ່ຂ່າວປະເສີດແຜ່ອອກໄປໃນແຂວງອາເຊຍ? (2 ຕ, ຄຳຖາມ 10)
_______________________________________________________________
ຂ. ມີເຈົ້າຂອງທາດຄົນໃດທີ່ຮັບເຊື່ອ? _________________________________________
ຄ. ທາດທີ່ໜີຈາກເພິ່ນໄປຊື່ຫຍັງ? _____________________________________________
ງ. ເປັນຫຍັງເພິ່ນກັບໄປຫາເຈົ້າຂອງທາດອີກ? ___________________________________
ຈ. ຄິດວ່າເຂົາທັງສອງເປັນຄົນເມືອງໃດ? ______________________________________
ສ. ຄຼິດສະຕະຈັກເມືອງໂກໂລຊາຍປະຊຸມຮ່ວມກັນຢູ່ໃສ? __________________________
ຊ. ແມ່ນໃຜປະກາດຕັ້ງຄຼິດສະຕະຈັກນັ້ນໄວ້? ____________________________________
ຍ. ໂປໂລຂຽນຈົດໝາຍສອງສະບັບໄປເຖິງຄົນໃນເມືອງນັ້ນ ຄື ສະບັບໜຶ່ງໄປເຖິງຄຼິດສະຕະຈັກ ແລະອີກສະບັບ ໜຶ່ງຂຽນເຖິງບຸກຄົນໃນຄຼິດສະຕະຈັກໂດຍຊະເພາະ ຄືສອງສະບັບໃດ?
_____________________________ ແລະ _________________________________
ດ. ມີອີກສອງຄຼິດສະຕະຈັກໃດໃນເຂດນັ້ນ? (ເບິ່ງແຜນທີ່ 2 ຕ, ຄຳຖາມ 5)
_____________________________ ແລະ _________________________________
ຕ. ໃນສອງຄຼິດສະຕະຈັກນັ້ນ ໂປໂລຂຽນຈົດໝາຍໄປຫາຄຼິດສະຕະຈັກໃດທີ່ຫາຍໄປແລ້ວ?
(ກລຊ 4:16) _______________________________________________________

**6** ຈາກເອເຟໂຊຈະປະກາດໄປເຖິງໂກລິນໂທ.
(ຮູບທີ 2 ຫຼັງຈາກ 2ປ, 4; 2ປ, 8-12; 3ຕ, 1-5; ໃນຕາຕະລາງໜ້າ 38).
ກ. ຫຼັງຈາກອາໂປໂລໄປປະກາດໃນໂກລິນໂທ ມີບັນຫາເກີດຂຶ້ນຄືບັນຫາໃດ?
(2 ປ, ຄຳຖາມ 8-12) ___________________________________________________

ຂ. ສ່ວນຈົດໝາຍທີ່ໂປໂລຂຽນໄປເຖິງຄຶດສະຕະຈັກໂກລິນໂທ ເຫັນແຕ່ສອງສະບັບໃນ
ພະຄຳພີ ແຕ່ປາກົດວ່າ ມີຈັກສະບັບທີ່ຫາຍໄປ?
(ເບິ່ງຕາມຕາຕະລາງນັ້ນອີກ) ________________________________________

ຄ. ໃນ 4 ສະບັບນັ້ນ ເພິ່ນຂຽນຈັກສະບັບຈາກເອເຟໂຊ? (ເບິ່ງຕາຕະລາງ) ___________

ງ. ສະບັບໃດຂຽນຈາກມາເກໂດເນຍ? (ເບິ່ງຕາຕະລາງ) ________________________

ຈ. ໂປໂລພະຍາຍາມແກ້ບັນຫາໃດແດ່ ໃນ 1 ໂກລິນໂທ? (2 ປ, ຄຳຖາມ 17-26) ______

____________________________________________________________
____________________________________________________________
____________________________________________________________
____________________________________________________________
____________________________________________________________
____________________________________________________________
____________________________________________________________
____________________________________________________________
____________________________________________________________
____________________________________________________________

ສ. ຫຼັງຈາກຂຽນ 1 ກລທ ໂປໂລໄປຢ້ຽມເຂົາໂດຍມີໃຈຢ່າງໃດ? (ຕາມຕາຕະລາງ)________

ຊ. ໂປໂລໃຊ້ໃຜເອົາຈົດໝາຍຫວ່າງກາງໄປໂກລິນໂທ? (3 ຊ, ຄຳຖາມ 4) ___________

**7** ແຜນການທີ່ຈະເດີນທາງຫຼັງຈາກເອເຟໂຊ (2 ປ, ຄຳຖາມ 2 ແລະ 3).

ກ. ໂປໂລນຶກຢາກໄປກຸງໃດ? ________________________________________

ຂ. ແຕ່ບໍ່ໄດ້ໄປໂລມເທື່ອ. ໄປສອງແຂວງໃດກ່ອນ? ______________ ແລະ __________

ຄ. ໃຊ້ຜູ້ຊ່ວຍສອງຄົນໃດໄປກ່ອນ? _________________ ກັບ __________________

**8** ຖຽງກັນກັບຄົນບໍ່ເຊື່ອໃນເອເຟໂຊ (2 ຕ, ຄຳຖາມ 12-20; 3 ຕ, ຄຳຖາມ 5-15). ຮຽນຈາກ
ພະທຳກິດຈະການ ເຫັນວ່າໂປໂລຖຽງກັບຄົນນອກໃນເອເຟໂຊຢ່າງນ້ອຍສອງເທື່ອ.

ກ. ເທື່ອທຳອິດຖຽງກັບລູກຊາຍຄົນຢິວ 7 ຄົນ. ຄົນຢິວທີ່ເປັນພໍ່ຂອງເຂົາຊື່ຫຍັງ? ________

ຂ. ເຂົາພະຍາຍາມເຮັດຫຍັງ? ________________________________________

ຄ. ເກີດມີຜົນຢ່າງໃດ? ____________________________________________

ງ. ຄົນທີ່ເຊື່ອເຫັນແລ້ວເຮັດຫຍັງ? _____________________________________

ຈ. ເທື່ອທີສອງຖຽງກັບຊ່າງຕີເງິນຊື່ຫຍັງ? __________________________________

ສ. ເປັນຫຍັງເພິ່ນຕໍ່ຕ້ານໂປໂລ? ________________________________________

ຊ. ເກີດມີຜົນຮັບຢ່າງໃດ? __________________________________________

**9** ການຍາກລຳບາກໃນເມືອງເອເຟໂຊ (2 ປ, ຄຳຖາມ 4-6; 3 ຂ, ຄຳຖາມ 3)
ໃນພະທຳກິດຈະການ ເຫັນວ່າໂປໂລຜ່ານການຍາກຫຼາຍຈົນກ່າວາໝົດຫວັງທີ່ຈະເອົາຊີວິດໃຫ້ພົ້ນໄດ້.

ກ. ໂປໂລເຫັນວ່າຜູ້ຕໍ່ຊູ້ເໝືອນສັດຢ່າງໃດ? (ເບິ່ງຮູບ 1 ລຸ່ມ ໜ້າ 27) ________________

ຂ. ເຫັນໃນຂໍ້ໃດ? ________________________________________________

ຄ. ໂປໂລຍົກຕົວຢ່າງໃດຈາກພະຄຳພີເດີມ? (ເບິ່ງຮູບ 3ຂ, ຄຳຖາມ 6) ______________

**10** ໂປໂລລາຈາກເອເຟໂຊໄປ (ເບິ່ງຮູບໃນ 3ຕ, ຄຳຖາມ 15)

ກ. ເມື່ອໂປໂລຈາກເອເຟໂຊໄປ ຕີໂຕຢູ່ໃສ? ________________________________

ຂ. ໂປໂລລໍຖ້າຕີໂຕແຕ່ບໍ່ເຫັນມາໃນເມືອງໃດ? ______________________________

ຄ. ເປັນຫຍັງໂປໂລຮ້ອນໃຈຢາກເຫັນຕີໂຕ? ________________________________

ງ. ຜົນສຸດທ້າຍໂປໂລພົບຕີໂຕຢູ່ໃສ? ____________________________________

## ພາກກາງ-ໄປມາເກໂດເນຍແລະອະຊາຢາ

**11** ການປະກາດຈາກມາເກໂດເນຍ ແລະ ຟີລິບປອຍ.

ກ. ໂປໂລກັບໄປແຂວງມາເກໂດເນຍ (ອາດຈະຢູ່ເມືອງຟີລິບປອຍ)
ມີຜົນລັບສຳຄັນສອງປະການ ຄືສອງປະການໃດ? (ເບິ່ງຮູບຢູ່ກັບ 3 ປ, ຄຳຖາມ 1) _____

________________________________________________________________

ຂ. ມາເຖິງແລ້ວໂປໂລພົບກັບລູກາ, ມີຄົນໃດອີກມາເຖິງຄືກັນ? (3 ປ, ຄຳຖາມ 6) _______

ຄ. ຕີໂຕເອົາຂ່າວດີ ຫຼືຂ່າວບໍ່ດີ ມາຈາກໂກລິນໂທ? (3 ປ, ຄຳຖາມ 9) _______________

ງ. ໂປໂລຈະໃຊ້ຕີໂຕໄປໃສຕໍ່? (3 ປ, ຄຳຖາມ 11) _____________________________

ຈ. ຝາກສະບັບໃດໄປນຳ? (3 ປ, ຄຳຖາມ 11) _________________________________

ສ. ໃນ 2 ກລທ ບົດ 12 ແລະ 13 ກ່າວເລື່ອງທີ່ໂປໂລຈະໄປຢ້ຽມເຂົາເປັນເທື່ອທີເທົ່າໃດ?
(3 ປ, ຄຳຖາມ 15) ____________________________________________

ຊ. ໂປໂລກັບໝູ່ເລີ້ມປະກາດຂ່າວປະເສີດໃນແຂວງໃໝ່ ຄືແຂວງໃດ?
(3 ປ, ຄຳຖາມ 1) _____________________________________________

**12** ສາມເດືອນໃນໂກລິນໂທ (ບົດສອນ 4 ຕ, ທັງໝົດບົດ). ເນື່ອງຈາກຕີໂຕໄປຢ້ຽມເຂົາ ແລະ ໂປໂລຂຽນຈົດໝາຍໄປຫາເຂົາ ບັນຫາທີ່ເຄີຍມີໃນຄຼິດສະຕະຈັກໂກລິນໂທ ສະຫງົບລົງແລ້ວ.

ກ. ໂປໂລຂຽນຈົດໝາຍໄປຫາຄຼິດສະຕຽນບ່ອນໃດ ໃນເວລາຢູ່ໂກລິນໂທ?
(ເບິ່ງຫົວເລື່ອງ ບົດ 4 ຕ) ________________________________________

ຂ. ເມື່ອຢູ່ໂກລິນໂທເທື່ອນີ້ ໂປໂລພັກໃນເຮືອນໃຜ? (4 ຕ, ຄຳຖາມ 8) ______________

ຄ. ໂປໂລມີແຜນການວ່າຈະໄປປະກາດພະທຳໃນປະເທດໃດ? (4 ຕ, ຄຳຖາມ 3-5) ______

ງ. ເລື່ອງນີ້ເຫັນໃນພະທຳໂລມບົດໃດ ຂໍ້ໃດ? (4 ຕ, ຄຳຖາມ 5) __________________

ຈ. ເພິ່ນຢາກຈະເດີນທາງອອກຈາກຄຼິດສະຕະຈັກໃດໄປ? (4 ຕ, ຄຳຖາມ 5) ___________

ສ. ເຖິງວ່າຫົວເລື່ອງໃນພະທຳໂລມຄ້າຍຄືກັນກັບຫົວເລື່ອງໃນພະທຳຄາລາເຕຍກໍຕາມ ແຕ່ວິທີສະເໜີເລື່ອງນັ້ນ ແຕກຕ່າງກັນຫຼາຍ, ຕ່າງກັນຢ່າງໃດ? (4 ຕ, ຄຳຖາມ 11-12)

________________________________________________

________________________________________________

________________________________________________

ຊ. ທັງສອງມີຫົວເລື່ອງຢ່າງໃດ? (4 ຕ, ຄຳຖາມ 10) ____________________________

ຍ. ໂປໂລກ່າວເລື່ອງຄວາມຊອບທຳໂດຍທາງຄວາມເຊື່ອໃຫ້ທັງສອງຊາດໃດ?
(4 ຕ, ຄຳຖາມ 13-14) ________________________________________________

ດ. ໂລມບົດໃດ ກ່າວເລື່ອງບາບ 3 ດ້ານໃນເມືອງໂກລິນໂທ? (4 ປ, ຄຳຖາມ 3) ________

**13** ຜ່ານມາເກໂດເນຍ ໂທອາດ ແລະ ມີເລໂຕ ກັບໄປເຢລູຊາເລັມ.
ໂປໂລມີແຜນການວ່າຈະກັບໄປເຢລູຊາເລັມທາງເມືອງອັນຕີໂອເຂຍ ແຂວງຊີເລຍ ແຕ່ໄປຕາມທາງນັ້ນ ບໍ່ໄດ້ (5 ຕ, ຄຳຖາມ 1-7).

ກ. ເປັນຫຍັງໄປທາງຊີເລຍບໍ່ໄດ້? (5 ຕ, ຄຳຖາມ 2) ____________________________

ຂ. ເພິ່ນປ່ຽນໃຈວ່າຈະໄປທາງແຂວງໃດ? (5 ຕ, ຄຳຖາມ 2) ______________________

ຄ. ຫຼາຍຄົນທີ່ເດີນທາງໄປກັບໂປໂລ ອາດຈະເປັນຜູ້ຕາງໜ້າໃຜ? (5 ຕ, ຄຳຖາມ 3)

________________________________________________

ງ. ເປັຫຍັງເຮົາຈຶ່ງຮູ້ວ່າລູກາເດີນທາງກັບໂປໂລອີກ? ____________________________

ຈ. ຜ່ານມາຈັກປີ ຕັ້ງແຕ່ໂປໂລຈາກລູກາໄປ? (ເບິ່ງຮູບ 3 ປ, ຄຳຖາມ 1) _____________

ສ. ອອກເດີນທາງຈາກເອເຟໂຊໄປແລ້ວ ເຂົາແວ່ໄປຢ້ຽມພີ່ນ້ອງຄຣິດສະຕຽນໃນເມືອງໃດກ່ອນ?
(5 ຕ, ຄຳຖາມ 7)____________________________________________

ຊ. ເຫັນການອັດສະຈັນໃດໃນເມືອງນັ້ນ? (5 ຕ, ຄຳຖາມ 9) ______________________

ຍ. ເດີນທາງໄປທິດໃຕ້ອີກ ແຕ່ແທນທີ່ຈະເຂົ້າໄປເອເຟໂຊ ພີ່ນ້ອງຈາກເອເຟໂຊມາຫາໂປໂລຢູ່ໃສ? (5 ຕ, ຄຳຖາມ 11-12) ________________________________________

ດ. ໂປໂລກ່າວຄຳປາໄສຕໍ່ພວກເຖົ້າແກ່ທີ່ມາຈາກເອເຟໂຊໃນ ກຈກ ບົດໃດ?
(5 ຕ, ຄຳຖາມ 13) _____________________________________________

**14** ມາເຖິງປາແລັດສະຕິນ ຄືເມືອງກາຍຊາເລຍ (5 ປ, ຄຳຖາມ 5).

ກ. ໃນເມືອງໃດ ມີຜູ້ທຳນວາຍເຕືອນໂປໂລເລື່ອງການຂົ່ມເຫັງທີ່ຈະພົບໃນກຸງເຢລູຊາເລັມ?

________________________________________________

ຂ. ຜູ້ທຳນວາຍນັ້ນ ຊື່ຫຍັງ? ________________________________________

ຄ. ໂປໂລພັກໃນເຮືອນຂອງໃຜ? ______________________________________

ງ. ອີກຈັກວັນໂປໂລກັບມາກາຍຊາເລຍ ລັກສະນະທີ່ເປັນນັກໂທດ? (6 ຕ, ຄຳຖາມ 7)

________________________________________________

**15** ມາເຖິງກຸງເຢລູຊາເລັມ (ບົດ 5 ປ).

ກ. ໂປໂລເອົາຫຍັງ ຈາກພີ່ນ້ອງຕ່າງຊາດໄປໃຫ້ພີ່ນ້ອງຊາດຢິວໃນກຸງເຢລູຊາເລັມ?
(5 ປ, ຄຳຖາມ 6) ____________________________________________

ຂ. ແຕ່ແທນທີ່ຈະເປີດໃຈກວ້າງຕໍ່ພີ່ນ້ອງຄົນຕ່າງຊາດທີ່ຊ່ວຍເຂົາ ພີ່ນ້ອງຊາດຢິວໃນເຢລູຊາເລັມຊັກຊວນໃຫ້ໂປໂລເຂົ້າ ພິທີຢິວ ຄືພິທີໃດ? (5 ປ, ຄຳຖາມ 7) __________

ຄ. ໂປໂລເຂົ້າຮ່ວມພິທີນັ້ນເກີດມີຜົນຮັບບໍ່ດີ ເຂົາຈັບໃຜ? (5 ປ, ຄຳຖາມ 8) __________

ງ. ແມ່ນໃຜໄປຊ່ວຍຊີວິດຂອງໂປໂລ? (5 ປ, ຄຳຖາມ 8) ______________________

ຈ. ໂປໂລຂໍອະນຸຍາດກ່າວໃຫ້ປະຊາຊົນຟັງ ເພິ່ນປາກພາສາໃດ? (5 ປ, ຄຳຖາມ 9) _____

ສ. ຂັ້ນສານສູງສຸດຂອງສາສະໜາຢິວແລ້ວປະໂລຫິດໃຫຍ່ສັ່ງໃຫ້ຄົນທີ່ຢືນໃກ້ໂປໂລເຮັດຫຍັງ?
(5 ປ, ຄຳຖາມ 12)____________________________________________

ຊ. ໂປໂລສວຍໂອກາດໃຫ້ສານສູງນັ້ນແຕກແຍກກັນອອກເປັນສອງພວກ ໂດຍເຮັດຫຍັງ?
(5 ປ, ຄຳຖາມ 13) ____________________________________________

ຍ. ຄົນຢິວເລີຍວາງແຜນການຈະຂ້າໂປໂລ, ແມ່ນຜູ້ໃດໄດ້ຍິນເລື່ອງນີ້? (6 ຕ, ຄຳຖາມ 3)

____________________________________________________________

ດ. ນາຍພັນໂລມເອົາໂປໂລໄປໃສ ຈຶ່ງຈະປອດໄພ? (6 ຕ, ຄຳຖາມ 4)

____________________________________________________________

## ພາກສຸດທ້າຍ

## ເປັນນັກໂທດໃນກາຍຊາເລຍ ກະເລເຕ ເມລິເຕ ແລະ ໂລມ

**16** ກັບໄປກາຍຊາເລຍໃນລັກສະນະເປັນນັກໂທດ. (ບົດ 6 ຕ)

ຜູ້ທຳນວາຍອາຄາໂບບອກໄວ້ກ່ອນ ໂປໂລຖືກມັດໄວ້ເປັນນັກໂທດ. ອີກ 12 ວັນ, ກັບມາກາຍຊາເລຍອີກ.

ກ. ຜູ້ນຳຄຼິດສະຕະຈັກໃນກາຍຊາເລຍທີ່ແນະນຳໄທເອທີໂອເປຍມາເຊື່ອໃນພະເຢຊູຊື່ຫຍັງ?
(6 ຕ, ຄຳຖາມ 8) ____________________________________________

ຂ. ມີອີກຄົນໃດໃນຄອບຄົວຂອງຟີລິບທີ່ຮັບໃຊ້ພະເຈົ້າ? (6 ຕ, ຄຳຖາມ 8) ___________

ຄ. ມີເຈົ້າໜ້າທີ່ສຳຄັນ 3 ຄົນ ທີ່ຮັບຟັງຄຳພະຍານຈາກໂປໂລຄືໃຜ? (6 ຕ, ຄຳຖາມ 10)

____________________________________________________________

ງ. ໃນ 3 ຄົນນັ້ນ ຄົນໃດບໍ່ເປັນຊາດຢິວ? (6 ຕ, ຄຳຖາມ 19) __________________

ຈ. ເປັນຫຍັງໂປໂລໄປກຸງໂລມ? (6 ຕ, ຄຳຖາມ 12) _________________________

**17** ເດີນທາງໄປກຸງໂລມ (ເບິ່ງແຜນທີ່ໃນບົດ 6 ໜ້າ 103)

ກ. ມີພີ່ນ້ອງຄຼິດສະຕຽນສອງຄົນໃດ ທີ່ຢູ່ກັບໂປໂລເມື່ອເດີນທາງໄປກຸງໂລມ?
(6 ປ, ຄຳຖາມ 2) ____________________________________________

ຂ. ນາຍທະຫານຄົນໂລມທີ່ເບິ່ງແຍງໂປໂລເມື່ອເດີນທາງໄປກຸງໂລມຊື່ຫຍັງ?
(6 ປ, ຄຳຖາມ 1) ________________________________________________

ຄ. ເຮືອຂອງເຂົາຈອດຢູ່ເກາະໃດ? (6 ປ, ຄຳຖາມ 5) ________________________

ງ. ໂປໂລແນະນຳໃຫ້ເຮັດຫຍັງ? (6 ປ, ຄຳຖາມ 6) ___________________________

ຈ. ເຂົາຕັດສິນໃຈເຮັດຢ່າງໃດ? (6 ປ, ຄຳຖາມ 6) __________________________

ສ. ຜົນຮັບເປັນຢ່າງໃດ? (6 ປ, ຄຳຖາມ 7) ______________________________

ຊ. ເຖິງໂປໂລເປັນນັກໂທດກໍຕາມແຕ່ເຫັນວ່າ ເພິ່ນຢູ່ໃກ້ສິດກັບພະເຈົ້າໂດຍມີເຫດການໃດ
ເກີດຂຶ້ນກັບເພິ່ນ? (6 ປ, ຄຳຖາມ 11) ________________________________

_____________________________________________________________

_____________________________________________________________

ຍ. ສຸດທ້າຍເຂົາຂຶ້ນບົກຢູ່ເກາະໃດ? (6 ປ, ຄຳຖາມ 12) _______________________

ດ. ໂປໂລເຫັນການອັດສະຈັນໃດຢູ່ເກາະນີ້? (6 ປ, ຄຳຖາມ 12) _________________

_____________________________________________________________

ຕ. ພີ່ນ້ອງຄຣິດສະຕຽນຈາກກຸງໂລມເດີນທາງມາຕ້ອນຮັບໂປໂລແລະໝູ່ຂອງເພິ່ນ, ຢູ່ສອງບ່ອນ
ໃດ? (6 ປ, ຄຳຖາມ 12) _____________________________________________

**18** ຖືກຂັງໄວ້ໃນກຸງໂລມເທື່ອທຳອິດ? (7 ຕ, ຄຳຖາມ 1)

ກ. ເທື່ອທຳອິດນີ້ ໂປໂລອາໄສຢູ່ໃນເຮືອນຢ່າງໃດ? ___________________________

ຂ. ເຖິງຖືກຂັງໄວ້ກໍຕາມ ແຕ່ໂປໂລຍັງສວຍໂອກາດຮັບໃຊ້ພະເຈົ້າຢ່າງໃດ? (ຄຳນຳບົດທີ 7 ຕ)

_____________________________________________________________

ຄ. ໂປໂລສາມາດຊ່ວຍຄົນໃດໃນເວລານັ້ນ? (7 ຕ, ຄຳຖາມ 4-7) _________________

_____________________________________________________________

ງ. ໂປໂລອາດຈະຂຽນຈົດໝາຍສະບັບໃດ... ໃນຍຸກທີ່ຖືກຂັງໄວ້ນີ້? (7 ຕ, ຄຳຖາມ 15) ____

_____________________________________________________________

ຈ. ເຖິງໂປໂລຖືກຂັງໄວ້ເປັນນັກໂທດກໍຕາມ ແຕ່ຍັງມີຄວາມສຸກຢູ່ ເພິ່ນກ່າວເລື່ອງຄວາມສຸກ
ນັ້ນໃນຈົດໝາຍໃດ ເປັນຕົ້ນ? (6 ຊ, ຄຳຖາມ 2) ____________________________

**19** ເຂົາປ່ອຍຊົ່ວຄາວ (7 ປ, ຄຳຖາມ 1-4).

ກ. ໃນຄາວຖືກປ່ອຍນີ້ໂປໂລອາດຈະໄປໃສ? (7 ປ, ຄຳຖາມ 3) __________________

_____________________________________________________________

ຂ. ຂຽນຈົດໝາຍສະບັບໃດ? (7 ປ, ຄຳຖາມ 2) _______________________________

ຄ. ແຕ່ບາງຄົນຄິດວ່າໂປໂລເດີນທາງໄປປະກາດຂ່າວປະເສີດໃນປະເທດໃດ?
(7 ປ, ຄຳຖາມ 4) ________________________________________________

**20** ຖືກຂັງໄວ້ໃນກຸງໂລມເທື່ອທີ 2 ແລ້ວຕາຍ. (7 ປ, ຄຳຖາມ 9-11)

ກ. ເທື່ອສຸດທ້າຍນີ້ ໂປໂລຖືກຂັງໄວ້ໃນຄຸກຢ່າງໃດ? (7 ປ, ຄຳຖາມ 9) _______________

ຂ. ໃນຍຸກນີ້ ເພິ່ນຂຽນຈົດໝາຍສະບັບໃດ? (7 ປ, ຄຳຖາມ 10) ____________________

ຄ. ໃຜເປັນເຈົ້າຈັກກະພັດໂລມໃນເວລານີ້? (7 ປ, ຄຳຖາມ 9) ____________________

ງ. ເນໂລ ນັ້ນ, ທໍລະມານຄຣິດສະຕຽນຢ່າງໃດ? (ເບິ່ງໃນກ່ອງ 4 ຫຼ່ຽມ ກ່ອນຄຳຖາມ 7 ປ, ຄຳຖາມ 9) ____________________________________________________

ຈ. ເຖິງຢ່າງນັ້ນກໍຕາມ ເມື່ອໂປໂລຖືກພິພາກສາ ເພິ່ນຍັງສວຍໂອກາດປະກາດຫຍັງ? (7 ປ, ຄຳຖາມ 10) ______________________________________________

ສ. ບໍ່ມີພີ່ນ້ອງຄຣິດສະຕຽນຈັກຄົນຢູ່ກັບໂປໂລ ມີໃຜມາຊູກຳລັງເພິ່ນຂຶ້ນ? (7 ປ, ຄຳຖາມ 10)

______________________________________________________________

ຊ. ເນື່ອງຈາກໂປໂລເປັນພົນລະເມືອງຂອງຈັກກະພັດໂລມ ຄິດວ່າເຂົາຈະປະຫານຊີວິດໂດຍວິທີໃດ? (ອັກສອນເນີ້ງ ກ່ອນຄຳຖາມ 7 ປ, 11) ___________________________

ຍ. ມີຂໍ້ພະທຳຄຳພີໃດ, ທີ່ສະແດງວ່າໂປໂລບໍ່ຢ້ານຕາຍ? (7 ປ, ຄຳຖາມ 11) _________

______________________________________________________________

ດ. ໂປໂລອາຍຸຫຼາຍແລ້ວ, ມີແຕ່ຄົນດູໝິ່ນ ແລະຂັງໄວ້ໃນຄຸກມືດ ແຕ່ຍັງຫວ່ງຜູ້ອື່ນຄືຕີໂມທຽວ ແລະຄົນທີ່ຈະ ຮັບເຊື່ອໃນອະນາຄົດ. ເພິ່ນຂຽນຈົດໝາຍສະບັບໃດໃນຍຸກນີ້? (ຫົວເລື່ອງໃນໜ້າ 127) ___________________________________________

<u>ໝາຍເຫດ</u>: ໃຫ້ທ່ານຮຽນຮູ້ແລະຊອກຫາສະຖານທີ່ສຳຄັນໃນແຜນທີ່ດັ່ງຕໍ່ໄປນີ້:

| | | | |
|---|---|---|---|
| ແຂວງອະຊາຢາ | ແຂວງອີລີລີກົນ | ແຂວງອາເຊຍ | ເຢລູຊາເລັມ |
| ກາຍຊາເລຍ | ແຂວງມາເກໂດເນຍ | ໂກໂລຊາຍ | ເມລິເຕ |
| ໂກລິນໂທ | ມີເລໂຕ | ກະເລເຕ | ຟີລິບປອຍ |
| ເອເຟໂຊ | ໂລມ | ແຂວງຄາລາເຕຍ | ໂທອາດ |

ແລ້ວໃຫ້ພະຍາຍາມຈື່ຈຳເຫດການສຳຄັນໃນແຕ່ລະບ່ອນ.

**ຄຳຕອບ:**

**1** *ກ. ຂອງທານ. ຂ. ຂໍ້ 1. ຄ. ຕີໂມທຽວ. ງ. ລີຊະທາ.*

**2** *ກ. ອາໂປໂລ. ຂ. ຍິວ. ຄ. ເມືອງອາເລັກຊັນເດຍ ທະວີບອາຟຼິກກາ.*
*ງ. ໂຢຮັນ. ຈ. ປີຊະກິລາ ກັບ ອາກິລາ. ສ. ໂກລິນໂທ. ຊ. ຖືພັກຖືພວກ.*

**3** *ກ. ມີ 12 ຄົນ. ຂ. ໂຢຮັນ. ຄ. ພະເຢຊູ. ງ. ພະວິນຍານບໍລິສຸດ.*
*ຈ. ປາກພາສາແປກໆ. ສ. ຍິບຜ້າເຕັ້ນ.*

**4** *ກ. ຫ້ອງປະຊຸມຂອງທ່ານຕີລາໂນ. ຂ. 2 ປີ.*

**ຄຳຕອບ (ຕໍ່):**

**5** *ກ. ໂປໂລເທດສະໜາໃນຫ້ອງປະຊຸມ...*
*ຜູ້ປ່າວປະກາດອອກໄປ...*
*ໂປໂລຂຽນຈົດໝາຍ.*
*ຂ. ຟີເລໂມນ. ຄ. ໂອເນຊີໂມ. ງ. ເພາະເພິ່ນກໍຮັບເຊື່ອໃນພະເຢຊູ.*
*ຈ. ໂກໂລຊາຍ. ສ. ໃນເຮືອນຂອງຟີເລໂມນ. ຊ. ເອປາຟາ.*
*ຍ. ໂກໂລຊາຍ ແລະ ຟີເລໂມນ. ດ. ເຮຍລາໂປລີ ແລະ ລາວດີເກອາ.*
*ຕ. ລາວດີເກອາ.*

**6** *ກ. ເຂົາແຍກເປັນພັກເປັນພວກ. ຂ. ອີກສອງສະບັບຫາຍໄປ. ຄ. ຂຽນ 3 ສະບັບ.*
*ງ. ຂຽນມາຈາກ 2 ກລທ.*
*ຈ. 1 ກລທ 5:1 ຄົນຫຼິ້ນຊູ້.*
*1 ກລທ 6:1 ສູ້ຄວາມກັນຕໍ່ໜ້າຄົນນອກສາດສະໜາ.*
*1 ກລທ 7:1 ບັນຫາກ່ຽວກັບການສົມລົດ.*
*1 ກລທ 8:1 ເລື່ອງອາຫານທີ່ຖະຫວາຍແກ່ພະທຽມ.*
*1 ກລທ 9:1 ຕອບຄົນທີ່ຫາຄວາມວ່າ ບໍ່ເປັນສາວົກ.*
*ບົດ 10 ແລະ 11 ຕອບເລື່ອງສິນມະຫາສະນິດ.*
*ບົດ 12 ແລະ 14 ຕອບເລື່ອງຂອງປະທານຈາກພະວິນຍານ.*
*ບົດ 13 ຍົກເລື່ອງຄວາມຮັກ.*
*ບົດ 15 ຕອບຄົນທີ່ປະຕິເສດການຄືນພະຊົນ.*
*ບົດ 16 ກ່າວເລື່ອງການສົງເຄາະ.*
*ສ. ທຸກໂສກ. ຊ. ຕີໂຕ.*

**7** *ກ. ໂລມ. ຂ. ມາເກໂດເນຍ, ອະຂາຢາ. ຄ. ຕີໂມທຽວກັບເອລາຊະໂຕ.*

**8** *ກ. ຊະເກວາ. ຂ. ໄລ່ຜີໂດຍນາມພະເຢຊູ. ຄ. ຜູ້ທີ່ມີຜີສິງໂດດໃສ່ເຂົາ...;*
*ງ. ສາລະພາບບາບແລະເປີດເຜີຍສິ່ງທີ່ເຮັດ. ຈ. ເດເມທີໂອ.*
*ສ. ຄົນທີ່ເຊື່ອພະເຢຊູບໍ່ໄດ້ຊື້ຮູບເຄົາລົບ. ຊ. ວຸ້ນວາຍ.*

**9** *ກ. ສັດຮ້າຍ. ຂ. 1 ກລທ 15:32. ຄ. ກິເດໂອນ.*

**10** *ກ. ໂກລິນໂທ. ຂ. ໂທອາດ. ຄ. ຢາກຮູ້ຂ່າວຈາກຄຼິດສະຕະຈັກໂກລິນໂທ.*
*ງ. ມາເກໂດເນຍ (ຟີລິບປອຍ).*

**11** *ກ. ການປະກາດຂ່າວປະເສີດໃນອີລີລິກົນ ແລະ 2 ກລທ ຝາກໄປກັບຕີໂຕ. ຂ. ຕີໂຕ.*
*ຄ. ຂ່າວດີ. ງ. ກັບໄປໂກລິນໂທ. ຈ. 2 ໂກລິນໂທ. ສ. ເທື່ອທີ 3. ຊ. ອີລີລິກົນ.*

**ຄຳຕອບ (ຕໍ່):**

**12** ກ. ໂລມ. ຂ. ຄາໂປ. ຄ. ສະເປນ. ງ. ໂລມ 15:24. ຈ. ໂລມ.
ສ. ໂປໂລຂຽນພະທຳຄາລາເຕຍໃນເວລາ ຕອບຄົນທີ່ສອນບໍ່ຈິງ (ໂປໂລຢາກຮ້າຍ) ແຕ່ຂຽນພະທຳໂລມຢ່າງລະອຽດໂດຍທ່າທີອ່ອນສຸພາບ.
ຊ. ໄດ້ຄວາມຊອບທຳໂດຍຄວາມເຊື່ອ. ຍ. ຊາດຢິວແລະຄົນຕ່າງຊາດ.
ດ. ໂລມ ບົດທີ 1.

**13** ກ. ຄົນຢິວເຂດນັ້ນຢາກຂ້າ. ຂ. ມາເກໂດເນຍ.
ຄ. ອາດຈະຕາງໜ້າຄຣິດສະຕະຈັກທີ່ເອົາຄວາມ ຊ່ວຍເຫຼືອໄປເຢລູຊາເລັມ.
ງ. ເຫັນໃຊ້ຄຳວ່າ"ພວກເຮົາ". ຈ.6 ປີ. ສ. ໂທອາດ. ຊ. ຄົນຕາຍຄືນມາ.
ຍ. ມີເລໂຕ. ດ. ກິດຈະການບົດ 20.

**14** ກ. ໃນເມືອງກາຍຊາເລຍ. ຂ. ອາຄາໂບ. ຄ. ຟີລິບ. ງ. ອີກ 12 ວັນ.

**15** ກ. ເອົາຊັບຊ່ວຍເຂົາ. ຂ. ພິທີຊຳລະຕົວ. ຄ. ຈັບໂປໂລ.
ງ. ນາຍພັນທະຫານໂລມ. ຈ. ເຮັບເລີ. ສ. ໃຫ້ຕົບປາກໂປໂລ.
ຊ. ໂປໂລກ່າວວ່າຕົນເອງເປັນພວກຟາລີຊາຍ ທີ່ເຊື່ອການຄືນມາຈາກຕາຍ.
ຍ. ລູກຊາຍຂອງນ້ອງສາວໂປໂລ. ດ. ເອົາໄປກາຍຊາເລຍ.

**16** ກ. ຟີລິບ. ຂ. ລູກສາວ 4 ຄົນ. ຄ. ເຟລິກ. ງ. ເຟລິກກັບເຟຊະໂຕ.
ຈ. ໂປໂລຂໍອຸທອນໄປເຖິງກາຍຊາ.

**17** ກ. ອາລິດຕາໂຄກັບລູກາ. ຂ. ຢູລີໂອ. ຄ. ກະເລເຕ.
ງ. ບໍ່ເຫັນດີໃຫ້ເດີນທາງຕໍ່. ຈ. ເຂົາເດີນທາງຕໍ່ໄປ. ສ. ເຂົາຖືກລົມພາຍຸ.
ຊ. (ໃຫ້ຍົກຕົວຢ່າງຈາກກ່ອງ 4 ຫຼ່ຽມ ໜ້າ 93). ຍ. ເມລິຕາ.
ດ. ງູພິດກັດໂປໂລແຕ່ບໍ່ມີອັນຕະລາຍແລະພໍ່ຂອງປັບລີໂອດີພະຍາດ.
ຕ. ຕ້ອນຮັບຢູ່ຕະຫຼາດອາປີໂອແລະຢູ່ອີກສາລາສາມຫຼັງ.

**18** ກ. ຢູ່ໃນເຮືອນເຊົ່າ.
ຂ. ປະກາດໃຫ້ແຂກທີ່ມາຢ້ຽມ, ໃຊ້ຜູ້ອື່ນ ອອກໄປປະກາດ, ຂຽນຈົດໝາຍແລະ ອ້ອນວອນ.
ຄ. ຄົນຢິວ, ຄົນຕ່າງຊາດ, ມາລະໂກ ໂອເນຊີໂມແລະຟີເລໂມນ.
ງ. ເອເຟໂຊ, ໂກໂລຊາຍ, ຟີເລໂມນ, ຟີລິບປອຍ.
ຈ. ພະທຳຟີລິບປອຍ.

**19** ກ. ໂກລິນໂທ, ມີເລໂຕ, ໂທອາດ, ເອເຟໂຊ ມາເກໂດເນຍແລະນີໂກໂປລີ.
ຂ. ຂຽນ 1 ຕີໂມທຽວແລະຕີໂຕ. ຄ. ສະເປນ.

**20** ກ. ຄຸກມືດ. ຂ. 2 ຕີໂມທຽວ. ຄ. ເນໂລ. ງ. ຖິ້ມໃນຖ້ຳສິງໂຕແລະເຜົາທັງເປັນ.
ຈ. ປະກາດພະທຳ. ສ. ພະເຈົ້າ. ຊ. ເອົາດາບທະຫານຕັດຫົວ.
ຍ. ຟລປ 1:23, 2 ຕມທ 4:7-8, ໂລມ 8:18, ໂລມ 8:35
ດ. ຕີໂມທຽວ.

**ການບ້ານບົດທີ 8 ພາກປາຍ**

## ທວນຄືນເລື່ອງຈົດໝາຍຂອງໂປໂລ

(ບໍ່ມີຄຳຖາມ-ຄຳຕອບ)

1 ໂກລິນໂທ ຂຽນຈາກເອເຟໂຊ. (2 ປ, ຄຳຖາມ 17-26)

- ເລື່ອງການແຍກເປັນພັກເປັນພວກ ໃນບົດ 1 ເຖິງ 4.
- ເລື່ອງການຕັດສິນລົງໂທດການຫຼິ້ນຊູ້ ໃນບົດ 5.
- ເລື່ອງການສູ້ຄວາມກັນຕໍ່ໜ້າຄົນນອກ ໃນບົດ 6.
- ເລື່ອງບັນຫາກ່ຽວກັບການສົມລົດ ໃນບົດ 7.
- ເລື່ອງອາຫານທີ່ຖະຫວາຍແກ່ພະທຽມ ໃນບົດ 8.
- ເລື່ອງສິດຂອງອັກຄະສາວົກ ໃນບົດ 9.
- ເລື່ອງລະບຽບການນະມັດສະການ ແລະສິນມະຫາສະນິດ ໃນບົດ 10-11.
- ເລື່ອງຂອງປະທານຈາກພະວິນຍານ ໃນບົດ 12 ເຖິງ 14.
- ເລື່ອງການຄືນພະຊົນ ໃນບົດ 15.
- ເລື່ອງການຊ່ວຍເຫຼືອໄພ່ພົນ ໃນບົດ 16.

2 ໂກລິນໂທ ຂຽນຈາກມາເກໂດເນຍ. (3 ຊ, ຄຳຖາມ 6-7)

- "ຄວາມອ່ອນແອມີຢູ່ທີ່ໃດ ລິດເດດຂອງພະເຈົ້າກໍເກີດຂຶ້ນເຕັມຂະໜາດຢູ່ທີ່ນັ້ນ"
- ຂອງທີ່ມີຄ່ານີ້ເຮົາມີຢູ່ໃນພາຊະນະດິນ. (2 ກລທ 4:7)
- ໄຊຊະນະໂດຍພະຄຼິດ (2 ກລທ 2:14-16)

ໂລມ ຂຽນຈາກໂກລິນໂທ.

| | | |
|---|---|---|
| ຖືວ່າເປັນຄົນຊອບທຳເພາະດ້ວຍຄວາມເຊື່ອ | - | ໂລມ 1:17 (4 ຕ, ຄຳຖາມ 10) |
| ບໍ່ມີຄົນຊອບທຳຈັກຄົນ | - | ໂລມ ບົດ 1-3 |
| ແຕ່ຍັງຊົງຖືວ່າເປັນຄົນຊອບທຳ | - | ໂລມ ບົດ 4-5 |
| ການດຳເນີນຊີວິດຕາມຄວາມຊອບທຳ | - | ໂລມ ບົດ 6-8 (4 ປ, ຄຳຖາມ 26) |
| ຮັກທັງຊາດຢິວແລະຄົນຕ່າງຊາດ | - | ໂລມ ບົດ 9-11 (5 ຊ) |
| ແຜນການປະກາດຂ່າວປະເສີດ | - | ໂລມ ບົດ 10 (4 ຊ) |
| ຢາກປະກາດພະທຳເຖິງສະເປນ | - | ໂລມ 15:24, ບົດ 28 (4 ຕ, ຄຳຖາມ 3-5) |

ເອເຟໂຊ ຂຽນຈາກໂລມເທື່ອທຳອິດທີ່ເຂົາຂັງໄວ້.

| | | |
|---|---|---|
| ພະວິນຍານເປັນທີ່ປະທັບຕາ | - | ເອເຟໂຊ 1:13 (1 ຊ, ຄຳຖາມ 9) |
| ພະວິນຍານມັດຈຳມໍລະດົກເຮົາ | - | ເອເຟໂຊ 1:14 (1 ຊ, ຄຳຖາມ 10) |
| ພະວິນຍານເປັນລິດອຳນາດ | - | ເອເຟໂຊ 1:17-20 (1 ຊ, ຄຳຖາມ 11) |

ໂກໂລຊາຍ ຂຽນຈາກໂລມເທື່ອທຳອິດ.

ບັນຫາໃນຄຣິດສະຕະຈັກ ແລະ ການແກ້ບັນຫານັ້ນ (2 ຊ, ຄຳຖາມ 6 ແລະ 8)

ປັນຍາຂອງໂລກ - ໂກໂລຊາຍ 2:8

ຫຼັກທຳຂອງມະນຸດ - ໂກໂລຊາຍ 2:16-17 ແລະ 22.

ອວດເລື່ອງທີ່ຖ່ອມຕົວແລະການນິມິດ - ໂກໂລຊາຍ 2:18

ຕັນຫາ - ໂກໂລຊາຍ 3:5

ຟີເລໂມນ ຂຽນຈາກໂລມເທື່ອທຳອິດ.

ເລື່ອງໂອເນຊີໂມ ຂ້ອຍຂ້າທີ່ໜີແລ້ວຮັບເຊື່ອໃນກຸງໂລມ.

ຂຽນໄປເຖິງຟີເລໂມນ ທີ່ເປັນຜູ້ນຳໃນຄຣິດສະຕະຈັກໂກໂລຊາຍ

ຂໍ້ 10 ເຖິງ 12. (7 ຕ, ຄຳຖາມ 6-7)

ຟີລິບປອຍ ຂຽນຈາກໂລມເທື່ອທຳອິດ.

ເລື່ອງຄວາມສຸກ - ຟີລິບປອຍ 3:1 ແລະ 4:4 (6 ຊ, ຄຳຖາມ 3)

1 ຕີໂມທຽວ ຂຽນເວລາຖືກປ່ອຍຊົ່ວຄາວ.

ເຖິງຕີໂມທຽວ ໃນເມືອງ ເອເຟໂຊ 1 ຕມທ 1:2-3

ເລື່ອງການສອນຜູ້ນຳໃນຄຣິດສະຕະຈັກ (7 ປ, ຄຳຖາມ 5-8)

ຕີໂຕ ຂຽນໃນຄາວທີ່ຖືກປ່ອຍ.

ເຖິງຕີໂຕຢູ່ເກາະກະເລເຕ - ຕີໂຕ 1:4-5

ເລື່ອງການສອນຜູ້ນຳໃນຄຣິດສະຕະຈັກ (7 ປ, ຄຳຖາມ 5-8)

2 ຕີໂມທຽວ ຂຽນເວລາຖືກຂັງໄວ້ໃນກຸງໂລມເທື່ອທີສອງ.

ເຖິງຕີໂມທຽວໃນເມືອງເອເຟໂຊ - 2 ຕມທ 4:6-8

ຄິດເຖິງອະນາຄົດ (7 ຊ, ຄຳຖາມ 1)